*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, No. 02, 251-256*
*https://doi.org/10.69692/SUJMRD1202251*

# The Motivation for Learning English Among Second and Third Year Students at Souphanouvong University

**Vilasack LADDAVONE[1*], Vira ANOLAC[2], YangXang[3], Somphone DEELIVONG[4], and Somchit PHANTHACHIT[5]**

*Department of Education and Development, Faculty of Education, Souphanouvong University, Lao PDR*

[1*]***Correspondence:*** *Vilasack LADDAVONE, Department of Inspection,, Souphanouvong University. Tel: +856 2055671489, E-mail: vilasackl@su.edu.la*

***Article Info:***
***Submitted: April 28, 2026***
***Revised: May 18, 2026***
***Accepted: May 25, 2026***

**Abstract**

This study aimed to investigate the level of motivation in learning English among second- and third-year students at Souphanouvong University, focusing on both intrinsic and extrinsic motivation. The sample consisted of 228 students from various faculties. A questionnaire was used as the primary instrument for data collection. The collected data were analyzed using frequency, percentage, mean, and standard deviation.

The findings revealed that, overall, the students demonstrated a high level of motivation in learning English ($\bar{x}$ = 4.00, SD = .88). Extrinsic motivation showed a higher mean score than intrinsic motivation, with mean scores of 4.16 (SD = .87) and 3.84 (SD = .89), respectively. These results indicate that students were mainly motivated by external factors, such as obtaining better job opportunities, pursuing higher education, and communicating with foreigners.

Regarding intrinsic motivation, the highest-rated factor was self-improvement ($\bar{x}$ = 4.08, SD = .82), followed by confidence in using English ($\bar{x}$ = 3.99, SD = .87) and enjoyment of learning English ($\bar{x}$ = 3.75, SD = .89). For extrinsic motivation, the highest-rated factor was using English to obtain a good job ($\bar{x}$ = 4.35, SD = .80), followed by future job applications ($\bar{x}$ = 4.22, SD = .84) and opportunities for studying abroad ($\bar{x}$ = 4.21, SD = .93). In contrast, learning English primarily for achieving good examination scores received the lowest mean score ($\bar{x}$ = 3.80, SD = .92), although it remained at a high level.

In conclusion, second and third-year students at Souphanouvong University demonstrated a high level of motivation in learning English. Career advancement, further education, and practical use of English in real-life situations were identified as the key motivating factors encouraging students to improve their English language skills in order to achieve their academic and professional goals in the future.

**Keywords:** motivation, English language learning, intrinsic motivation, extrinsic motivation, university students, Souphanouvong University

## 1. ພາກສະເໜີ

ພາສາອັງກິດເປັນພາສາສາກົນທີ່ມີບົດບາດສຳຄັນຢ່າງຫຼວງຫຼາຍໃນສະຕະວັດທີ 21 ເນື່ອງຈາກເປັນພາສາທີ່ຖືກນຳມາໃຊ້ໃນການສື່ສານລະຫວ່າງປະເທດ ຄວບຄູ່ກັບການນຳໃຊ້ເຂົ້າໃນດ້ານການສຶກສາ, ວິທະຍາສາດ, ເຕັກໂນໂລຢີ, ທຸລະກິດ, ການທູດ ແລະ ການທ່ອງທ່ຽວ. ໃນຍຸກໂລກາພິວັດ ທີ່ມີການເຊື່ອມໂຍງຂໍ້ມູນຂ່າວສານ

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (*http://creativecommons.org/licenses/by-nc-nd/4.0/

ແລະ ການແລກປ່ຽນທາງດ້ານເສດຖະກິດ ແລະ ວັດທະນະທຳຢ່າງກວ້າງຂວາງ ພາສາອັງກິດຈຶ່ງກາຍເປັນເຄື່ອງມືສຳຄັນທີ່ຊ່ວຍໃຫ້ບຸກຄົນສາມາດເຂົ້າເຖິງຄວາມຮູ້ ແລະ ສ້າງໂອກາດໃນການພັດທະນາຕົນເອງໄດ້ຢ່າງກວ້າງຂວາງ. ຂອບເຂດການສຶກສາ, ວິທະຍາສາດ ແລະ ວັດທະນະທຳ ແລະ ສະຫະປະຊາຊາດ UNESCO ( 2015 ; 2021 ) ໄດ້ໃຫ້ຄວາມສຳຄັນຕໍ່ການພັດທະນາທັກສະພາສາອັງກິດ ໂດຍຖືວ່າພາສາອັງກິດເປັນໜຶ່ງໃນທັກສະພື້ນຖານທີ່ຈຳເປັນສຳລັບການດຳລົງຊີວິດ ແລະ ການເຮັດວຽກໃນສັງຄົມສະໄໝໃໝ່. ມີຫຼາຍປະເທດທົ່ວໂລກ ລວມທັງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ຈຶ່ງໄດ້ໃຫ້ຄວາມສຳຄັນຕໍ່ການພັດທະນາການຮຽນການສອນພາສາອັງກິດ ເພື່ອເພີ່ມຂີດຄວາມສາມາດໃນການແຂ່ງຂັນພ້ອມການສ້າງກຳລັງຄົນທີ່ມີຄຸນນະພາບໃຫ້ທັນກັບການປ່ຽນແປງຂອງສັງຄົມທົ່ວໂລກ.

ໃນລະບົບການສຶກສາຂອງ ສປປ ລາວ ພາສາອັງກິດໄດ້ຖືກບັນຈຸເປັນວິຊາບັງຄັບຕັ້ງແຕ່ລະດັບການສຶກສາຂັ້ນພື້ນຖານ ຈົນເຖິງລະດັບວິຊາສະເພາະ. ການຮຽນຮູ້ພາສາອັງກິດບໍ່ໄດ້ມີຈຸດປະສົງພຽງແຕ່ໃຫ້ນັກສຶກສາສາມາດສື່ສານໄດ້ເທົ່ານັ້ນ ແຕ່ຍັງເປັນເຄື່ອງມືໃນການຄົ້ນຄວ້າຫາຄວາມຮູ້, ການເຂົ້າເຖິງເອກະສານວິຊາການລະດັບສາກົນ, ການສຶກສາຕໍ່ ແລະ ການເຮັດວຽກໃນອົງການທີ່ຢູ່ພາຍໃນປະເທດ ແລະ ຕ່າງປະເທດ. ໂດຍສະເພາະໃນລະດັບມະຫາວິທະຍາໄລ ການນຳໃຊ້ພາສາອັງກິດມີຄວາມຈຳເປັນຢ່າງຫຼວງຫຼາຍເນື່ອງຈາກນັກສຶກສາຕ້ອງໄດ້ສຶກສາຄົ້ນຄວ້າຂໍ້ມູນຈາກເອກະສານຕ່າງປະເທດ ແລະ ມີການພົວພັນທາງວິຊາການກັບສາກົນຫຼາຍຂຶ້ນ. ດັ່ງນັ້ນ, ການພັດທະນາຄວາມສາມາດດ້ານພາສາອັງກິດຂອງນັກສຶກສາ ຈຶ່ງເປັນພາລະກິດສຳຄັນຂອງສະຖາບັນການສຶກສາໃນການຜະລິດບັນດິດທີ່ມີຄຸນນະພາບ ແລະ ພ້ອມເຂົ້າສູ່ຕະຫຼາດແຮງງານຢ່າງມີປະສິດທິພາບ.

ປັດໃຈທີ່ສຳຄັນ ແລະ ມີອິດທິພົນຕໍ່ຄວາມສຳເລັດໃນການຮຽນພາສາ ຄື "ແຮງຈູງໃຈ" ເຊິ່ງເປັນພະລັງຂັບເຄື່ອນທີ່ກະຕຸ້ນໃຫ້ຜູ້ຮຽນເກີດຄວາມຕັ້ງໃຈ, ຄວາມພະຍາຍາມ ແລະ ຄວາມອົດທົນໃນການຮຽນຮູ້. ແນວຄວາມຄິດກ່ຽວກັບແຮງຈູງໃຈໃນການຮຽນພາສາໄດ້ຮັບການສຶກສາຄົ້ນຄວ້າຢ່າງກວ້າງຂວາງໃນຂົງເຂດພາສາສາດ ແລະ ຈິດຕະວິທະຍາການສຶກສາ. Gardner and Lambert (1972) ໄດ້ອະທິບາຍວ່າ ແຮງຈູງໃຈເປັນຕົວກຳນົດສຳຄັນຂອງລະດັບຄວາມພະຍາຍາມ ແລະ ຄວາມຕັ້ງໃຈຂອງຜູ້ຮຽນ ໂດຍແບ່ງແຮງຈູງໃຈອອກເປັນ 2 ຮູບແບບຫຼັກ ຄື: ແຮງຈູງໃຈແບບປະສົມປະສານ ທີ່ເກີດຈາກຄວາມຕ້ອງການເຂົ້າໃຈວັດທະນະທຳ ແລະ ສັງຄົມຂອງເຈົ້າຂອງພາສາ ແລະ ແຮງຈູງໃຈແບບເຄື່ອງມື ທີ່ເກີດຈາກຄວາມຕ້ອງການນຳເອົາພາສາໄປໃຊ້ເພື່ອປະໂຫຍດດ້ານການສຶກສາ ຫຼື ອາຊີບ. ນອກຈາກນີ້ Gardner (1985) ແລະ Deci & Ryan (2000) ຍັງໄດ້ຊີ້ໃຫ້ເຫັນວ່າແຮງຈູງໃຈມີຄວາມສຳພັນໂດຍກົງກັບຕໍ່ຜົນສຳເລັດທາງການຮຽນ ແລະ ສາມາດສົ່ງຜົນຕໍ່ພຶດຕິກຳການຮຽນຂອງນັກສຶກສາໄດ້ຢ່າງຊັດເຈນ.

ແຮງຈູງໃຈໃນການຮຽນພາສາອັງກິດຂອງນັກສຶກສາອາດຈະໄດ້ຮັບອິດທິພົນຈາກຫຼາຍປັດໄຈ ເຊັ່ນ: ສະພາບແວດລ້ອມການຮຽນການສອນ, ຄຸນນະພາບຂອງສື່ການສອນ ແລະ ອຸປະກອນການສອນ, ວິທີການສອນຂອງອາຈານ, ທັດສະນະຄະຕິຂອງນັກສຶກສາຕໍ່ພາສາອັງກິດ, ຄວາມຄາດຫວັງຂອງຄອບຄົວ ແລະ ສັງຄົມ ຕະຫຼອດຈົນເຖິງປັດໃຈພາຍໃນຂອງຕົວນັກສຶກສາເອງ. ດັ່ງນັ້ນ ຄວາມສຳເລັດໃນການຮຽນພາສາອັງກິດຈຶ່ງບໍ່ໄດ້ຂຶ້ນກັບຄວາມສາມາດດ້ານສະຕິປັນຍາເທົ່ານັ້ນ ແຕ່ຍັງຂຶ້ນກັບລະດັບແຮງຈູງໃຈຂອງຜູ້ຮຽນອີກດ້ວຍ. ຜູ້ຮຽນທີ່ມີແຮງຈູງໃຈສູງ ມັກຈະມີຄວາມຕັ້ງໃຈຮຽນ, ກ້າສະແດງອອກໃນການສື່ສານ, ສະແຫວງຫາຄວາມຮູ້ເພີ່ມເຕີມ ແລະ ມີຄວາມອົດທົນຕໍ່ອຸປະສັກໃນການຮຽນ. ໃນທາງກົງກັນຂ້າມ ຜູ້ຮຽນທີ່ຂາດແຮງຈູງໃຈມັກຈະບໍ່ໃຫ້ຄວາມສົນໃຈຕໍ່ການຮຽນ, ຂາດຄວາມຮັບຜິດຊອບ ແລະ ມີຜົນການຮຽນຕໍ່າ.

ມະຫາວິທະຍາໄລສຸພານຸວົງໄດ້ມີການຈັດການຮຽນການສອນພາສາອັງກິດ ແລະ ຝຶກອົບຮົມຂັ້ນພື້ນຖານຈົນເຖິງລະດັບວິຊາສະເພາະດ້ານໃຫ້ນັກສຶກສາຢ່າງຕໍ່ເນື່ອງ ເຊັ່ນ: ພາສາອັງກິດສຳລັບວິຊາອາຊີບຄູ, ພາສາອັງກິດສຳລັບທຸລະກິດ, ພາສາອັງກິດສຳລັບກະເສດສາດ ແລະ ພາສາອັງກິດສຳລັບເຕັກນິກໃນວິຊາຊີບ, ແຕ່ລະດ້ານວິຊາອາຊີບເພື່ອໃຫ້ນັກສຶກສາສາມາດນຳໃຊ້ພາສາອັງກິດໃນການຮຽນ, ການຄົ້ນຄວ້າ ແລະ ການສື່ສານເຂົ້າໃນວິຊາຊີບຂອງຕົນ. ເຖິງຈະມີຈັດການຮຽນການສອນແບບຕໍ່ເນື່ອງກໍ່ຕາມ ຍັງພົບບັນຫານັກສຶກສາບາງສ່ວນຍັງມີການຂາດຮຽນ, ຂາດຄວາມສົນໃຈໃນການຮຽນພາສາອັງກິດ ຫຼື ເລືອກຮຽນພຽງວິຊາທີ່ຕົນເອງມັກ. ນອກຈາກນີ້ ຜົນການຮຽນພາສາອັງກິດຂອງນັກສຶກສາໃນແຕ່ລະຄະນະວິຊາຍັງມີຄວາມແຕກຕ່າງກັນ, ໂດຍອ້າງອີງຈາກໃບຄະແນນຂອງນັກສຶກສາຈາກພະແນກວິຊາການແຕ່ລະຄະນະວິຊາ ເຫັນວ່າບາງຄະນະວິຊາມີຜົນການຮຽນພາສາອັງກິດຢູ່ໃນລະດັບດີ ແລະ ດີຫຼາຍ ແລະ ຄະນະຍັງພົບເຫັນວ່າຍັງມີຜົນການຮຽນຕໍ່າເນື່ອງຈາກພື້ນຖານການຮຽນ, ຄວາມສົນໃຈ ແລະ ແຮງຈູງໃຈໃນການຮຽນທີ່ແຕກຕ່າງກັນ. ຈາກຂໍ້ມູນການປະເມີນຜົນການຮຽນພາສາອັງກິດຂອງນັກສຶກສາຈາກພະແນກວິຊາການ,ຄະນະວິຊາ ພົບວ່ານັກສຶກສາບາງກຸ່ມສາມາດສອບໄດ້ຄະແນນສູງ ແລະ ມີຄວາມສາມາດນຳໃຊ້ພາສາອັງກິດໃນການສື່ສານໄດ້ດີ ແຕ່ຂະນະດຽວກັນ ຍັງພົບວ່ານັກສຶກສາອີກຈຳນວນໜຶ່ງທີ່ມີຄະແນນຕໍ່າ ແລະ ຂາດທັກສະພື້ນຖານດ້ານພາສາອັງກິດ. ນອກຈາກນີ້ ຜົນການຮຽນຂອງນັກສຶກສາຍັງມີຄວາມແຕກຕ່າງກັນຫຼາຍ ໂດຍນັກສຶກສາສ່ວນໜຶ່ງມີຄະແນນສະເລ່ຍສູງສຸດເຖິງ CGPA = 4.00 ຄິດເປັນ 44.36% ໃນຂະນະທີ່ນັກສຶກສາບາງຄົນມີຄະແນນສະເລ່ຍຕໍ່າສຸດເທົ່າກັບ CGPA = 0.00 ຄິດເປັນ 55.64% ຄວາມແຕກຕ່າງດັ່ງກ່າວສາມາດອະທິບາຍໄດ້ຈາກຄ່າດັດສະນີການກະຈາຍຂອງຂໍ້ມູນ ເຊັ່ນ: ຄ່າ Range ແລະ ຄ່າສ່ວນບ່ຽງເບນມາດຕະຖານ ຊຶ່ງເປັນດັດສະນີສະເລ່ຍທີ່ໃຊ້ວັດລະດັບການກະຈາຍຂອງຂໍ້ມູນ. ຖ້າຄ່າສ່ວນບ່ຽງເບນມາດຕະຖານມີຄ່າສູງ ຈະສະແດງວ່າຄະແນນຂອງນັກສຶກສາມີຄວາມແຕກຕ່າງກັນຫຼາຍ ແລະ ຂໍ້ມູນມີການກະຈາຍຕົວສູງ (Wiersma & Jurs, 2009). ໃນກໍລະນີນີ້ ຄະແນນຕໍ່າສຸດເທົ່າກັບ 0.00 ແລະ ຄະແນນສູງສຸດເທົ່າກັບ 4.00 ສະແດງໃຫ້ເຫັນວ່າ (Range = 4.00) ມີຄວາມແຕກຕ່າງດ້ານຜົນການຮຽນຢ່າງຊັດເຈນ ແລະ ອາດຈະກ່ຽວຂ້ອງກັບແຮງຈູງໃຈຂອງນັກສຶກສາ ຊຶ່ງເປັນປັດໃຈສຳຄັນທີ່ມີອິດທິພົນຕໍ່ພຶດຕິກຳການຮຽນ, ຄວາມພະຍາຍາມ ແລະ ຜົນສຳເລັດທາງການສຶກສາຂອງນັກສຶກສາໃນແຕ່ລະຄະນະວິຊາ.

ໂດຍສະເພາະນັກສຶກສາຊັ້ນປີທີ 2 ແລະ ປີທີ 3 ແມ່ນຢູ່ໃນຊ່ວງສຳຄັນຂອງການພັດທະນາທັກສະວິຊາຊີບ ແລະ ການກຳນົດເປົ້າໝາຍອາຊີບໃນອະນາຄົດ. ນັກສຶກສາໄລຍະປີຮຽນເລົ່ານີ້ ຈຳເປັນຕ້ອງພັດທະນາທັກສະການນຳໃຊ້ພາສາ ອັງກິດໃຫ້ມີປະສິດທິພາບ ເພື່ອເປັນພື້ນຖານໃນການສຶກສາຕໍ່ ແລະ ການເຂົ້າສູ່ຕະຫຼາດແຮງງານ. ດັ່ງນັ້ນ, ການສຶກສາແຮງຈູງໃຈໃນການຮຽນພາສາອັງກິດຂອງນັກສຶກສາກຸ່ມນີ້ ຈຶ່ງເປັນເລື່ອງສຳຄັນ ເພາະຜົນການສຶກສາຈະຊ່ວຍໃຫ້ສາມາດເຂົ້າໃຈສະພາບແຮງຈູງໃຈ ແລະ ປັດໃຈທີ່ກ່ຽວຂ້ອງຢ່າງເປັນລະບົບ

ເພື່ອນຳໄປສູ່ການກຳນົດແນວທາງ ຫຼື ມາດຕະການໃນການສົ່ງເສີມແຮງຈູງໃຈໃຫ້ເໝາະສົມກັບສະພາບຕົວຈິງ.

ດັ່ງນັ້ນ, ການຄົ້ນຄວ້າຄັ້ງນີ້ມີຈຸດປະສົງເພື່ອ:ສຶກສາລະດັບແຮງຈູງໃຈໃນການຮຽນພາສາອັງກິດ ຂອງນັກສຶກສາຊັ້ນປີ 2 ແລະ ປີ 3 ມະຫາວິທະຍາໄລ ສຸພານຸວົງ. ຜົນການສຶກສາຄາດວ່າຈະເປັນປະໂຫຍດທັງດ້ານທິດສະດີ ແລະ ດ້ານການນຳໄປປະຍຸກໃຊ້ ໂດຍສາມາດນຳໃຊ້ເປັນຂໍ້ມູນໃນການພັດທະນາການຮຽນການສອນພາສາອັງກິດ, ການປັບປຸງຫຼັກສູດ, ການສ້າງກິດຈະກຳສົ່ງເສີມແຮງຈູງໃຈ ແລະ ການພັດທະນາຄຸນນະພາບຂອງນັກສຶກສາໃຫ້ມີຄວາມພ້ອມທັງດ້ານຄວາມຮູ້ ແລະ ທັກສະທີ່ສອດຄ່ອງກັບຄວາມຕ້ອງການຂອງສັງຄົມ ແລະ ຕະຫຼາດແຮງງານໃນຍຸກປັດຈຸບັນ.

## 2. ອຸປະກອນ ແລະ ວິທີການ

ການຄົ້ນຄວ້າໃນຄັ້ງນີ້ເປັນການຄົ້ນຄວ້າແບບປະລິມານ ໂດຍນຳໃຊ້ຮູບແບບການສຳຫຼວດ ເພື່ອສຶກສາລະດັບແຮງຈູງໃຈໃນການຮຽນພາສາອັງກິດຂອງນັກສຶກສາປີທີ 2 ແລະ ປີທີ 3 ຂອງມະຫາວິທະຍາໄລ ສຸພານຸວົງ, ໂດຍເກັບກຳຂໍ້ມູນຜ່ານແບບສອບຖາມ ແລະ ນຳຂໍ້ມູນມາວິເຄາະດ້ວຍວິທີທາງສະຖິຕິ.

### 2.1 ປະຊາກອນ

ປະຊາກອນທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ ແມ່ນນັກສຶກສາປີທີ 2 ແລະ ປີທີ 3 ຂອງ ມະຫາວິທະຍາໄລ ສຸພານຸວົງ ໃນສົກຮຽນ 2025-2026 ຈຳນວນທັງໝົດ 532 ຄົນ

### 2.2 ກຸ່ມຕົວຢ່າງ

ກຸ່ມຕົວຢ່າງໃນການຄົ້ນຄວ້າ ໄດ້ກຳນົດຂະໜາດຂອງກຸ່ມຕົວຢ່າງໂດຍນຳໃຊ້ສູດຂອງ Yamane (1973) ທີ່ຄ່າຄວາມຄາດເຄື່ອນ .05 ແລະ ເລືອກກຸ່ມຕົວຢ່າງໂດຍວິທີການສຸ່ມແບບງ່າຍ, ເພື່ອໃຫ້ນັກສຶກສາທຸກຄົນມີໂອກາດຖືກຄັດເລືອກເທົ່າທຽມກັນ ແລະ ໄດ້ກຸ່ມຕົວຢ່າງ 228 ຄົນ.

### 2.3 ເຄື່ອງມື ທີ່ໃຊ້ໃນການລວບລວມຂໍ້ມູນ

ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ ແມ່ນແບບສອບຖາມ (Questionnaire) ທີ່ຜູ້ຄົ້ນຄວ້າສ້າງຂຶ້ນຈາກການສຶກສາເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ ໂດຍແບ່ງອອກເປັນ 2 ພາກ ດັ່ງນີ້:

**ພາກທີ 1 ຂໍ້ມູນທົ່ວໄປ**

ເປັນແບບສອບຖາມກ່ຽວກັບຂໍ້ມູນພື້ນຖານຂອງຜູ້ຕອບ ເຊັ່ນ: ເພດ, ອາຍຸ, ຊັ້ນປີ, ຄະນະ ແລະ ປະສົບການໃນການຮຽນພາສາອັງກິດ ເປັນຕົ້ນ ໂດຍໃຊ້ຄຳຖາມແບບກວດຄືນ (Checklist).

**ພາກທີ 2 ລະດັບແຮງຈູງໃຈໃນການຮຽນພາສາອັງກິດ**

ເປັນແບບສອບຖາມກ່ຽວກັບແຮງຈູງໃຈໃນການຮຽນພາສາອັງກິດ ໂດຍໃຊ້ມາດຕາສ່ວນປະເມີນຄ່າ 5 ລະດັບ (Likert Scale) ດັ່ງນີ້:

5 ໝາຍເຖິງ ມີລະດັບແຮງຈູງໃຈຫຼາຍທີ່ສຸດ

4 ໝາຍເຖິງ ມີລະດັບແຮງຈູງໃຈຫຼາຍ

3 ໝາຍເຖິງ ມີລະດັບແຮງຈູງໃຈປານກາງ

2 ໝາຍເຖິງ ມີລະດັບແຮງຈູງໃຈໜ້ອຍ

1 ໝາຍເຖິງ ມີລະດັບແຮງຈູງໃຈໜ້ອຍທີ່ສຸດ

ຂໍ້ຄຳຖາມລະດັບດ້ານແຮງຈູງໃຈພາຍໃນ ແລະ ແຮງຈູງໃຈພາຍນອກ ເຊັ່ນ ຄວາມສົນໃຈໃນການຮຽນ, ຄວາມຕ້ອງການນຳໄປໃຊ້ໃນອາຊີບ, ການສື່ສານກັບຊາວຕ່າງປະເທດ ແລະ ຄວາມຕ້ອງການສຶກສາຕໍ່.

### 2.4. ການກວດສອບຄຸນນະພາບເຄື່ອງມື

ຜູ້ຄົ້ນຄວ້າໄດ້ນຳແບບສອບຖາມໄປໃຫ້ຜູ້ຊ່ຽວຊານຈຳນວນ 3 ທ່ານ ກວດສອບຄວາມສອດຄ່ອງຂອງເນື້ອໃນ ໂດຍຄຳນວນຄ່າ IOC ຊຶ່ງຄ່າ IOC ຢູ່ລະຫວ່າງ 0.66-1.00 ຖືວ່າຂໍ້ຄຳຖາມມີຄວາມເໝາະສົມ.ຫຼັງຈາກນັ້ນ ໄດ້ນຳແບບສອບຖາມໄປທົດລອງໃຊ້ກັບນັກສຶກສາທີ່ບໍ່ແມ່ນກຸ່ມຕົວຢ່າງຈຳນວນ 30 ຄົນ ແລະ ນຳຂໍ້ມູນມາວິເຄາະຄ່າຄວາມເຊື່ອໝັ້ນ ໂດຍໃຊ້ສູດສຳປະສິດ Cronbach's Alpha Coefficient ໄດ້ຄ່າຄວາມເຊື່ອໝັ້ນເທົ່າກັບ 0.80 ຊຶ່ງຖືວ່າແບບສອບຖາມມີຄວາມເຊື່ອໝັ້ນຢູ່ໃນລະດັບດີ.

### 2.5. ການເກັບກຳຂໍ້ມູນ

ການເກັບກຳຂໍ້ມູນໃນຄັ້ງນີ້ ຜູ້ຄົ້ນຄ້ວາເຮັດໜັງສືສະເໜີຂໍເກັບກຳຂໍ້ມູນເພື່ອຂໍອະນຸຍາດຈາກພາກວິຊາ ຫຼື ຄະນະວິຊາທີ່ກ່ຽວຂ້ອງໂດຍມີການລະບຸເຫດຜົນ, ວິທີການເກັບກຳ, ຈຳນວນກຸ່ມຕົວຢ່າງ, ຂອບເຂດຂອງກຸ່ມຕົວຢ່າງ, ໄລຍະເວລາ ແລະ ປະສານ ຫາອາຈານປະຈຳວິຊາ ແລະ ຄະນະວິຊາ ແລະ ນຳແບບສອບຖາມໄປແຈກຢາຍໃຫ້ກຸ່ມຕົວຢ່າງ ໂດຍມີການອະທິບາຍວິທີການຕອບຢ່າງລະອຽດ ຈາກນັ້ນໄດ້ເກັບແບບສອບຖາມຄືນຄົບຕາມຈຳນວນ 100%.

### 2.6. ການວິເຄາະຂໍ້ມູນ

ຂໍ້ມູນທີ່ໄດ້ຈາກແບບສອບຖາມ ໄດ້ນຳມາວິເຄາະໂດຍໂປຼແກຼມສຳເລັດຮູບທາງສະຖິຕິ (SPSS) ເພື່ອວິເຄາະຫາຄ່າສະເລ່ຍ ($\bar{x}$) ແລະ ຄ່າຜົນປ່ຽນມາດຖານ (SD) ໂດຍກຳນົດເກນການແປຄວາມໝາຍຄ່າສະເລ່ຍໄວ້ ດັ່ງນີ້:

ຄະແນນສະເລ່ຍ 4.50 - 5.00 ໝາຍເຖິງ ລະດັບແຮງຈູງໃຈໃນການຮຽນ ຫຼາຍທີ່ສຸດ

ຄະແນນສະເລ່ຍ 3.50 - 4.49 ໝາຍເຖິງ ລະດັບແຮງຈູງໃຈໃນການຮຽນ ຫຼາຍ

ຄະແນນສະເລ່ຍ 2.50 - 3.49 ໝາຍເຖິງ ລະດັບແຮງຈູງໃຈໃນການຮຽນ ປານກາງ

ຄະແນນສະເລ່ຍ 1.50 - 2.49 ໝາຍເຖິງ ລະດັບແຮງຈູງໃຈໃນການຮຽນ ໜ້ອຍ

ຄະແນນສະເລ່ຍ 1.00 - 1.49 ໝາຍເຖິງ ລະດັບແຮງຈູງໃຈໜ້ອຍທີ່ສຸດ

## 3. ຜົນໄດ້ຮັບ

ລະດັບແຮງຈູງໃຈໃນການຮຽນພາສາອັງກິດຂອງນັກສຶກສາຊັ້ນ ປີ 2 ແລະ ປີ 3 ມະຫາວິທະຍາໄລ ສຸພານຸວົງ ໂດຍສຶກສາທັງແຮງຈູງໃຈພາຍໃນ ແລະ ແຮງຈູງໃຈພາຍນອກ ພົບວ່າ

1) ດ້ານແຮງຈູງໃຈພາຍໃນທີ່ມີຄ່າສະເລ່ຍຫຼາຍທີ່ສຸດ ຄື ດ້ານຢາກພັດທະນາຕົນເອງ ($\bar{x}$ = 4.08, SD = .82) ສະແດງວ່າ ນັກສຶກສາເຫັນຄວາມສຳຄັນຂອງພາສາອັງກິດໃນການເພີ່ມພູນຄວາມຮູ້ ແລະ ພັດທະນາຄວາມສາມາດຂອງຕົນເອງ. ຮອງລົງມາ ຄື ດ້ານຄວາມໝັ້ນໃຈເມື່ອສາມາດນຳໃຊ້ພາສາອັງກິດໄດ້ ($\bar{x}$ = 3.99, SD = .87) ສະແດງວ່າ ນັກສຶກສາຮູ້ສຶກພາກພູມໃຈ ແລະ ເກີດຄວາມໝັ້ນໃຈເມື່ອສາມາດໃຊ້ພາສາອັງກິດໄດ້ຈິງ. ດ້ານຄວາມຮູ້ສຶກດ້ວຍຄວາມມັກຮຽນພາສາອັງກິດ ມີຄ່າສະເລ່ຍ ($\bar{x}$ = 3.75, SD = .89) ເຫັນວ່າ ນັກສຶກສາມີທັດສະນະທີ່ດີ ແລະ ມີຄວາມສົນໃຈຕໍ່ການຮຽນພາສາອັງກິດ. ສ່ວນດ້ານເພາະຢາກເຂົ້າໃຈວັດທະນະທຳຂອງເຈົ້າຂອງພາສາ ມີຄ່າສະເລ່ຍ ($\bar{x}$ = 3.69, SD = .87) ສະແດງວ່າ ນັກສຶກສາສົນໃຈຮຽນຮູ້ວັດທະນະທຳ ແລະ ສັງຄົມຂອງຊາວຕ່າງປະເທດ. ສຳລັບດ້ານການຮຽນ

ພາສາອັງກິດເປັນສ່ວນໜຶ່ງໃນຊີວິດຕົນເອງ ມີຄ່າສະເລ່ຍໜ້ອຍກວ່າໝູ່ ($\bar{x}$ = 3.68, SD = .98) ແຕ່ຍັງຢູ່ໃນເກນລະດັບຫຼາຍຢູ່ ຊຶ່ງສະແດງວ່າ ນັກສຶກສາບາງສ່ວນຍັງບໍ່ໄດ້ນຳພາສາອັງກິດເຂົ້າມາເປັນສ່ວນໜຶ່ງຂອງຊີວິດປະຈຳວັນຢ່າງເຕັມທີ່ (ຕາຕະລາງທີ 1).

2) ດ້ານແຮງຈູງໃຈພາຍນອກ ທີ່ມີຄ່າສະເລ່ຍຫຼາຍທີ່ສຸດ ຄື ເພື່ອໃຊ້ພາສາອັງກິດໃນການຫາວຽກງານທີ່ດີ ($\bar{x}$ = 4.35, SD = .80) ນັກສຶກສາເຫັນວ່າພາສາອັງກິດເປັນທັກສະສຳຄັນຕໍ່ການປະກອບອາຊີບ ແລະ ການເຂົ້າເຖິງໂອກາດການເຮັດວຽກທີ່ດີໃນອະນາຄົດ. ຮອງລົງມາ ຄື ເພື່ອການສະໝັກວຽກໃນອະນາຄົດ ($\bar{x}$ = 4.22, SD = .84) ສະແດງວ່າ ນັກສຶກສາເຫັນວ່າພາສາອັງກິດມີຄວາມຈຳໃນການແຂ່ງຂັນລະດັບດ້ານອາຊີບ ແລະ ຕໍ່ມາດ້ານຈະໄດ້ຮັບໂອກາດຮຽນຕໍ່ຕ່າງປະເທດ ມີຄ່າສະເລ່ຍ ($\bar{x}$ = 4.21, SD = .93) ສະແດງໃຫ້ເຫັນວ່ານັກສຶກສາມີຄວາມຄາດຫວັງໃນການສຶກສາຕໍ່ ແລະ ການພັດທະນາຕົນເອງໃນລະດັບສາກົນ. ສ່ວນດ້ານເພື່ອນຳໃຊ້ໃນການສື່ສານກັບຄົນຕ່າງປະເທດ ມີຄ່າສະເລ່ຍ ($\bar{x}$ = 4.20, SD = .85) ສະແດງໃຫ້ເຫັນວ່າ ນັກສຶກສາເຫັນຄວາມສຳຄັນຂອງການສື່ສານໃນຍຸກສະໄໝໃໝ່. ຂະນະທີ່ອີກດ້ານເພື່ອສອບເສັງໃຫ້ໄດ້ຄະແນນດີ ມີຄ່າສະເລ່ຍໜ້ອຍກວ່າໝູ່ ($\bar{x}$ = 3.80, SD = .92) ແຕ່ຍັງຢູ່ໃນເກນລະດັບຫຼາຍຢູ່ ຊຶ່ງສະແດງວ່າ ນັກສຶກສາໃຫ້ຄວາມສຳຄັນກັບການນຳໃຊ້ພາສາອັງກິດໃນຊີວິດຈິງ ແລະ ອະນາຄົດຫຼາຍກວ່າການຮຽນເພື່ອຜົນຄະແນນພຽງຢ່າງດຽວ (ຕາຕະລາງທີ 2).

ຜົນການສຶກສາຄັ້ງນີ້ສະແດງໃຫ້ເຫັນວ່າ ນັກສຶກສາປີ 2 ແລະ ປີ 3 ມີລະດັບແຮງຈູງໃຈໃນການຮຽນພາສາອັງກິດທີ່ມີຄ່າສະເລ່ຍລວມຢູ່ໃນລະດັບຫຼາຍ ($\bar{x}$ = 4.00, SD=.88 ).ໂດຍສະເພາະແຮງຈູງໃຈພາຍນອກມີຄ່າສະເລ່ຍ ($\bar{x}$ = 4.16, SD = .87) ຫຼາຍກວ່າແຮງຈູງໃຈພາຍໃນທີ່ມີຄ່າສະເລ່ຍ ($\bar{x}$ = 3.84, SD = .89) ຊຶ່ງສະແດງໃຫ້ເຫັນວ່າ ປັດໃຈດ້ານອາຊີບດ້ານການຍົກລະດັບສຶກສາຕໍ່ ແລະ ການນຳໃຊ້ພາສາອັງກິດໃນຊີວິດຈິງເປັນປັດໄຈສຳຄັນທີ່ກະຕຸ້ນໃຫ້ນັກສຶກສາມີຄວາມພະຍາຍາມໃນການພັດທະນາທັກສະພາສາອັງກິດ, ເພື່ອໃຫ້ສາມາດບັນລຸເປົ້າໝາຍດ້ານການສຶກສາ ແລະ ການປະກອບອາຊີບໃນອະນາຄົດ (ຕາຕະລາງທີ 3).

**4. ວິພາກຜົນ**

ຜົນການສຶກສາລະດັບແຮງຈູງໃຈໃນການຮຽນພາສາອັງກິດຂອງນັກສຶກສາປີ 2 ແລະ ປີ 3 ພົບວ່າ ນັກສຶກສາມີແຮງຈູງໃຈໃນການຮຽນພາສາອັງກິດໂດຍລວມຢູ່ໃນເກນລະດັບຫຼາຍ ທັງແຮງຈູງໃຈພາຍໃນ ແລະ ແຮງຈູງໃຈພາຍນອກ ໂດຍແຮງຈູງໃຈພາຍນອກມີຄ່າສະເລ່ຍຫຼາຍກວ່າແຮງຈູງໃຈພາຍໃນ ຊຶ່ງສອດຄ່ອງກັບແນວຄິດຂອງ Gardner ແລະ Lambert (1972) ທີ່ອະທິບາຍວ່າ ແຮງຈູງໃຈພາຍນອກເປັນປັດໃຈສຳຄັນທີ່ຊ່ວຍກະຕຸ້ນໃຫ້ຜູ້ຮຽນພະຍາຍາມພັດທະນາທັກສະພາສາ ເພື່ອບັນລຸເປົ້າໝາຍດ້ານການສຶກສາ ແລະ ອາຊີບ. ຜົນການສຶກສານີ້ຍັງສະທ້ອນໃຫ້ເຫັນວ່າ ນັກສຶກສາໃນຍຸກປະຈຸບັນໃຫ້ຄວາມສຳຄັນພາສາອັງກິດ ໃນຖານະເປັນພາສາສາກົນທີ່ຈຳເປັນຕໍ່ການສຶກສາ, ການປະກອບອາຊີບ ແລະ ການສື່ສານໃນສັງຄົມຍຸກສະໄໝໃໝ່.

ຈາກຜົນການວິເຄາະແຮງຈູງໃຈພາຍໃນ ພົບວ່າ ດ້ານຢາກພັດທະນາຕົນເອງມີຄ່າສະເລ່ຍຫຼາຍທີ່ສຸດ ($\bar{x}$ = 4.08, SD = .82) ສະແດງວ່າ ນັກສຶກສາມີຄວາມຕ້ອງການທີ່ຈະພັດທະນາຄວາມຮູ້ ແລະ ສັກຍະພາບຂອງຕົນເອງຜ່ານການຮຽນພາສາອັງກິດ ຊຶ່ງສອດຄ່ອງກັບທິດສະດີຂອງ Deci ແລະ Ryan (1985) ທີ່ອະທິບາຍວ່າ ຜູ້ຮຽນຈະເກີດແຮງຈູງໃຈພາຍໃນເມື່ອເຫັນຄຸນຄ່າ ແລະ ຄວາມໝາຍຂອງສິ່ງທີ່ຕົນເອງກຳລັງຮຽນ. ທັງນີ້ ການທີ່ນັກສຶກສາຕ້ອງການພັດທະນາຕົນເອງຜ່ານການຮຽນພາສາອັງກິດ ອາດເປັນເພາະວ່າ ພາສາອັງກິດເປັນທັກສະສຳຄັນສຳລັບການສຶກສາຄົ້ນຄວ້າ ການຮັບຂ່າວສານ ແລະ ການພັດທະນາສັກຍະພາບໃນອະນາຄົດ

ນອກຈາກນັ້ນ ດ້ານຄວາມໝັ້ນໃຈເມື່ອສາມາດນຳໃຊ້ພາສາອັງກິດໄດ້ ມີຄ່າສະເລ່ຍຫຼາຍ ($\bar{x}$ = 3.99, SD = .87) ຊຶ່ງສະແດງວ່າ ນັກສຶກສາຮູ້ສຶກພາກພູມໃຈ ແລະ ເກີດຄວາມເຊື່ອໝັ້ນໃນຕົນເອງເມື່ອສາມາດນຳໃຊ້ພາສາອັງກິດໄດ້ຢ່າງຖືກຕ້ອງ. ຜົນການສຶກສານີ້ສອດຄ່ອງກັບແນວຄິດຂອງ Bandura (1977; 1986) ທີ່ກ່າວວ່າ ຄວາມເຊື່ອໝັ້ນໃນຄວາມສາມາດຂອງຕົນເອງ ຈະຊ່ວຍໃຫ້ຜູ້ຮຽນມີຄວາມພະຍາຍາມ ແລະ ກ້າທີ່ຈະນຳຄວາມຮູ້ໄປໃຊ້ຈິງ. ດັ່ງນັ້ນ ການທີ່ນັກສຶກສາມີຄວາມໝັ້ນໃຈໃນການໃຊ້ພາສາອັງກິດ ຈຶ່ງເປັນຕົວຊີ້ວັດວ່າ ຜູ້ຮຽນມີທັດສະນະທີ່ດີຕໍ່ການຮຽນພາສາອັງກິດ ແລະ ພ້ອມທີ່ຈະນຳພາສາໄປໃຊ້ໃນຊີວິດຈິງ.

ສຳລັບດ້ານຄວາມມັກໃນການຮຽນພາສາອັງກິດ ($\bar{x}$ = 3.75, SD = .89) ແລະ ດ້ານການຢາກເຂົ້າໃຈວັດທະນະທຳຂອງເຈົ້າຂອງພາສາ ($\bar{x}$ = 3.69, SD = .87) ສະແດງໃຫ້ເຫັນວ່າ ນັກສຶກສາມີຄວາມສົນໃຈທັງໃນດ້ານຕົວພາສາ ແລະ ວັດທະນະທຳຂອງຜູ້ໃຊ້ພາສາອັງກິດ ຊຶ່ງສອດຄ່ອງກັບແນວຄິດ ຂອງ Gardner ທີ່ກ່າວວ່າ ຜູ້ຮຽນຈະເກີດແຮງຈູງໃຈໃນການຮຽນພາສາ ເມື່ອມີຄວາມສົນໃຈ ແລະ ຕ້ອງການເຂົ້າໃຈສັງຄົມ ແລະ ວັດທະນະທຳຂອງເຈົ້າຂອງພາສາ. ຢ່າງໃດກໍຕາມ ດ້ານການຮຽນພາສາອັງກິດເປັນສ່ວນໜຶ່ງໃນຊີວິດ ມີຄ່າສະເລ່ຍໜ້ອຍກວ່າດ້ານອື່ນ ($\bar{x}$ = 3.68, SD = .98) ອາດເປັນເພາະວ່າ ນັກສຶກສາບາງສ່ວນຍັງບໍ່ມີໂອກາດໄດ້ນຳໃຊ້ພາສາອັງກິດໃນຊີວິດປະຈຳວັນຫຼາຍພຽງພໍເນື່ອງຈາກສະພາບແວດລ້ອມການໃຊ້ພາສາຍັງຈຳກັດ.

ສ່ວນຜົນການວິເຄາະແຮງຈູງໃຈພາຍນອກ ພົບວ່າ ດ້ານເພື່ອໃຊ້ໃນການຫາວຽກງານທີ່ດີ ມີຄ່າສະເລ່ຍຫຼາຍທີ່ສຸດ ($\bar{x}$ = 4.35, SD = .80) ຊຶ່ງສະແດງວ່າ ນັກສຶກສາເຫັນຄວາມສຳຄັນຂອງ ພາສາອັງກິດເປັນທັກສະສຳລັບການເຂົ້າເຖິງອາຊີບທີ່ດີ ແລະ ການແຂ່ງຂັນໃນຕະຫຼາດແຮງງານ. ຜົນການສຶກສານີ້ສອດຄ່ອງກັບການສຶກສາຂອງ Dörnyei (1994; 2001) ທີ່ອະທິບາຍວ່າ ຜູ້ຮຽນມັກຈະມີແຮງຈູງໃຈສູງ ເມື່ອເຫັນວ່າ ພາສາສາມາດນຳໄປສູ່ໂອກາດທາງອາຊີບ ແລະ ຄວາມກ້າວໜ້າໃນຊີວິດ. ສະພາບດັ່ງກ່າວອາດເກີດຈາກການປ່ຽນແປງທາງເສດຖະກິດ ແລະ ການແຂ່ງຂັນໃນສັງຄົມປະຈຸບັນ ທີ່ເຮັດໃຫ້ພາສາອັງກິດກາຍເປັນຄວາມຕ້ອງການພື້ນຖານຂອງຫຼາຍອາຊີບ

ນອກຈາກນັ້ນ ດ້ານການສະໝັກວຽກໃນອະນາຄົດ ($\bar{x}$ = 4.22, SD = .84) ແລະ ດ້ານໂອກາດການຮຽນຕໍ່ຕ່າງປະເທດ ($\bar{x}$ = 4.21, SD = .93) ຍັງພົບວ່າ ນັກສຶກສາເຫັນຄວາມສຳຄັນຂອງພາສາອັງກິດໃນການຂະຫຍາຍໂອກາດດ້ານການສຶກສາ ແລະ ອາຊີບ. ທັງນີ້ສອດຄ່ອງກັບການສຶກສາຂອງ Oxford ແລະ Shearin (1994) ທີ່ພົບວ່າ ເປົ້າໝາຍດ້ານອະນາຄົດ ແລະ ຄວາມສຳເລັດໃນຊີວິດ ເປັນປັດໃຈສຳຄັນທີ່ກະຕຸ້ນໃຫ້ຜູ້ຮຽນພະຍາຍາມຮຽນພາສາຕ່າງປະເທດ. ຂະນະທີ່ດ້ານເພື່ອສອບເສັງໃຫ້ໄດ້ຄະແນນດີ ມີຄ່າສະເລ່ຍໜ້ອຍກວ່າດ້ານອື່ນ ($\bar{x}$ = 3.80, SD = .92) ຊຶ່ງສະແດງວ່າ ນັກສຶກສາບໍ່ໄດ້ຮຽນພາສາອັງກິດເພື່ອຜົນຄະແນນພຽງຢ່າງດຽວ ແຕ່ຍັງເຫັນຄວາມສຳຄັນຂອງການນຳພາສາໄປໃຊ້ຈິງໃນອະນາຄົດ.

ດັ່ງນັ້ນ ຈາກຜົນການສຶກສາສາມາດສະຫຼຸບໄດ້ວ່າ ນັກສຶກສາປີ 2 ແລະ ປີ 3 ມີແຮງຈູງໃຈທັງພາຍໃນ ແລະ ພາຍນອກໃນການຮຽນ

ພາສາອັງກິດ ແຕ່ແຮງຈູງໃຈພາຍນອກມີອິດທິພົນຫຼາຍກວ່າ ໂດຍສະເພາະປັດໃຈດ້ານອາຊີບ ການຍົກລະດັບສຶກສາຕໍ່ ແລະ ການນຳໃຊ້ພາສາໃນຊີວິດຈິງ ຊຶ່ງສາມາດນຳໄປໃຊ້ເປັນແນວທາງໃນການພັດທະນາການຮຽນການສອນພາສາອັງກິດ ໂດຍການເນັ້ນກິດຈະກຳທີ່ເຊື່ອມໂຍງກັບການນຳໃຊ້ພາສາໃນຊີວິດຈິງ ແລະ ອານາຄົດດ້ານອາຊີບໄປພ້ອມກັບການສ້າງແຮງຈູງໃຈພາຍໃນໃຫ້ເກີດຂຶ້ນຢ່າງຕໍ່ເນື່ອງ.

## 5. ສະຫຼຸບ

ຜົນການວິໄຈໃນຄັ້ງນີ້ສາມາດສະຫຼຸບໄດ້ວ່າ ນັກສຶກສາຊັ້ນປີ 2 ແລະ ປີ 3 ມີແຮງຈູງໃຈໃນການຮຽນພາສາອັງກິດໃນລະດັບຫຼາຍ, ຊຶ່ງສະທ້ອນໃຫ້ເຫັນຢ່າງຊັດເຈນວ່າ ນັກສຶກສາມີທັດສະນະໃນທາງບວກ ແລະ ມີຄວາມພ້ອມທັງດ້ານອາລົມ ແລະ ຈິດໃຈໃນການຮຽນຮູ້ພາສາອັງກິດ ເຊິ່ງເປັນປັດໃຈພື້ນຖານສຳຄັນທີ່ຊ່ວຍສົ່ງເສີມຜົນສຳເລັດທາງການຮຽນ

ຜົນການວິເຄາະທີ່ພົບວ່າ ແຮງຈູງໃຈພາຍໃນມີລະດັບຫຼາຍ ບໍ່ພຽງແຕ່ສະທ້ອນເຖິງຄວາມສົນໃຈ ແລະ ຄວາມພໍໃຈສ່ວນຕົວໃນການຮຽນ ແຕ່ຍັງບົ່ງບອກເຖິງລະດັບ “ຄວາມເປັນເອກະລາດໃນການຮຽນ” ພາສາອັງກິດເອີ້ນວ່າ “Learner autonomy” ຂອງນັກສຶກສາ ທີ່ສາມາດກຳນົດເປົ້າໝາຍ ແລະ ຄວບຄຸມການຮຽນຂອງຕົນເອງໄດ້ ຊຶ່ງເປັນຄຸນລັກສຳຄັນຂອງຜູ້ຮຽນໃນສັງຄົມສະໄໝໃໝ່.

ພ້ອມກັນນັ້ນ ການທີ່ແຮງຈູງໃຈພາຍນອກຢູ່ໃນລະດັບຫຼາຍກວ່າແຮງຈູງໃຈພາຍໃນ ສະແດງໃຫ້ເຫັນວ່າ ນັກສຶກສາຍັງຄົງເຫັນຄຸນຄ່າຄວາມສຳຄັນຂອງພາສາອັງກິດທາງດ້ານອາຊີບ ແລະ ໂອກາດໃນອະນາຄົດ ເຊັ່ນ ການຫາວຽກງານ ຫຼື ການສຶກສາຕໍ່, ດັ່ງນັ້ນ ແຮງຈູງໃຈທັງສອງປະເພດຈຶ່ງບໍ່ໄດ້ຂັດແຍ່ງກັນ ແຕ່ກັບເສີມສ້າງກັນໃນການຜະລິດຜົນການຮຽນຮູ້ຢ່າງມີປະສິດທິຜົນ.

ໃນທາງປະຕິບັດ ຜົນການວິໄຈນີ້ຂໍມີຄຳແນະນຳ ຜູ້ສອນ ແລະ ບໍລິຫານການສຶກສາ ຄວນໃຫ້ຄວາມສຳຄັນກັບການສ້າງບັນຍາກາດການຮຽນທີ່ສົ່ງເສີມແຮງຈູງໃຈພາຍໃນເຊັ່ນ: ການໃຫ້ຜູ້ຮຽນມີສ່ວນຮ່ວມ ການໃຫ້ອິດສະລະນັກສຶກສາກ້າສະແດງອອກໃນການຮຽນ ແລະ ການອອກແບບກິດຈະກຳທີ່ເໝາະສົມ ໃນຂະນະດຽວກັນ ກໍ່ຄວນໃຊ້ແຮງຈູງໃຈພາຍນອກເປັນກົນໄກເສີມ ເຊັ່ນ ການໃຫ້ລາງວັນ ຫຼື ການກຳນົດເປົ້າໝາຍທີ່ຊັດເຈນ.

ແນວໃດກໍຕາມ ຜົນການວິໄຈນີ້ຍັງມີຂໍ້ຈຳກັດ ເຊັ່ນ ການສຶກສາໃນກຸ່ມຕົວຢ່າງຈຳກັດ ແລະ ການເກັບຂໍ້ມູນແບບຄັ້ງດຽວ ດັ່ງນັ້ນ ການວິໄຈໃນອະນາຄົດ ຫຼື ຄັ້ງຕໍ່ໄປຄວນຂະຫຍາຍກຸ່ມຕົວຢ່າງ ແລະ ໃຊ້ວິທີການວິໄຈແບບປະສົມ, ເພື່ອເພີ່ມຄວາມຊັດເຈນ ແລະ ຄວາມເຊື່ອຖືຂອງຜົນການສຶກສາ

ໂດຍສະຫຼຸບລວມ ການວິໄຈນີ້ໄດ້ຊີ້ໃຫ້ເຫັນຢ່າງຊັດເຈນວ່າແຮງຈູງໃຈພາຍນອກເປັນຫົວໃຈຫຼັກຂອງການຮຽນພາ ສາອັງກິດ ແລະ ເປັນຖານສຳຄັນໃນການພັດທະນາຜູ້ຮຽນໃຫ້ມີສັກກະຍະພາບສູງໃນອະນາຄົດ

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Bandura, A. (1977). Self-efficacy: Toward a unifying theory of behavioral change. *Psychological Review, 84(2)*, 191–215.

Bandura, A. (1986). *Social foundations of thought and action: A social cognitive theory*. Prentice-Hall.

Deci, E. L., & Ryan, R. M. (1985). *Intrinsic motivation and self-determination in human behavior*. Plenum Press.

Deci, E. L., & Ryan, R. M. (2000). The “what” and “why” of goal pursuits: Human needs and the self-determination of behavior. *Psychological Inquiry, 11*(4), 227–268.

Dörnyei, Z. (1994). Motivation and motivating in the foreign language classroom. *The Modern Language Journal, 78*(3), 273–284.

Dörnyei, Z. (2001). *Motivational strategies in the language classroom*. Cambridge University Press.

Gardner, R. C. (1985). *Social psychology and second language learning: The role of attitudes and motivation*. Edward Arnold.

Gardner, R. C., & Lambert, W. E. (1972). *Attitudes and motivation in second-language learning*. Newbury House Publishers.

Maslow, A. H. (1954). *Motivation and personality*. Harper & Row.

Oxford, R. L., & Shearin, J. (1994). Language learning motivation: Expanding the theoretical framework. *The Modern Language Journal, 78*(1), 12–28.

Ryan, R. M., & Deci, E. L. (2000). Intrinsic and extrinsic motivations: Classic definitions and new directions. *Contemporary Educational Psychology, 25*(1), 54–67.

Wiersma, W., & Jurs, S. G. (2009). *Research methods in education: An introduction* (9th ed.). Pearson Education.

Yamane, T. (1973). *Statistics: An introductory analysis* (3rd ed.). Harper & Row.

UNESCO. (2015). *Rethinking education: Towards a global common good?* UNESCO Publishing.

UNESCO. (2021). *Reimagining our futures together: A new social contract for education.* UNESCO Publishing.

**ຕາຕະລາງທີ 1 :** ຜົນການວິເຄາະ ໂດຍຄ່າສະເລ່ຍ ($\bar{x}$), ຄ່າຜັນປ່ຽນມາດຖານ (SD) ແລະ ລະດັບແຮງຈູງໃຈພາຍໃນການຮຽນພາສາອັງກິດຂອງນັກສຶກສາປີ 2 ແລະ ປີ 3 ທີ່ມະຫາວິທະຍາໄລ ສຸພານຸວົງ

| ລ/ດ | ແຮງຈູງໃຈພາຍໃນ | $\bar{x}$ | SD | ລະດັບ |
|---|---|---|---|---|
| 1 | ມີຄວາມຮູ້ສຶກດ້ວຍຄວາມມັກຮຽນພາສາອັງກິດ | 3.7588 | .89966 | ຫຼາຍ |
| 2 | ມີຄວາມຢາກພັດທະນາຕົນເອງ | 4.0877 | .82964 | ຫຼາຍ |
| 3 | ມີຄວາມໝັ້ນໃຈເມື່ອສາມາດນຳໃຊ້ພາສາອັງກິດໄດ້ | 3.9956 | .87801 | ຫຼາຍ |
| 4 | ເພາະຢາກເຂົ້າໃຈທາງດ້ານວັດທະນະທຳຂອງເຂົາເຈົ້າ. | 3.6930 | .87175 | ຫຼາຍ |
| 5 | ການຮຽນພາສາອັງກິດເປັນສ່ວນຫນຶ່ງໃນຊີວິດຂອງຂ້ອຍ. | 3.6886 | .98197 | ຫຼາຍ |
| | **ລວມ** | **3.84474** | **.892206** | **ຫຼາຍ** |

**ຕາຕະລາງທີ 2 :** ຜົນການວິເຄາະ ໂດຍຄ່າສະເລ່ຍ ($\bar{x}$), ຄ່າຜັນປ່ຽນມາດຖານ (SD) ແລະ ລະດັບແຮງຈູງໃຈພາຍນອກ ການຮຽນພາສາອັງກິດຂອງນັກສຶກສາປີ 2 ແລະ ປີ 3 ທີ່ມະຫາວິທະຍາໄລ ສຸພານຸວົງ

| ລ/ດ | ແຮງຈູງໃຈພາຍນອກ | $\bar{x}$ | SD | ລະດັບ |
|---|---|---|---|---|
| 1 | ເພື່ອສອບເສັງໃຫ້ໄດ້ຄະແນນດີ | 3.8026 | .92949 | ຫຼາຍ |
| 2 | ເພື່ອການສະໝັກວຽກໃນອະນາຄົດ | 4.2237 | .84372 | ຫຼາຍ |
| 3 | ເພື່ອໃຊ້ໃນການສື່ສານກັບຄົນຕ່າງ ປະເທດ | 4.2061 | .85337 | ຫຼາຍ |
| 4 | ເພື່ອໃຊ້ໃນການຫາວຽກງານທີ່ດີ | 4.3509 | .80179 | ຫຼາຍ |
| 5 | ເພາະຈະໄດ້ຮັບໂອກາດຮຽນຕໍ່ຕ່າງປະເທດ | 4.2193 | .93166 | ຫຼາຍ |
| | **ລວມ** | **4.16052** | **.872006** | **ຫຼາຍ** |

**ຕາຕະລາງທີ 3.** ລະດັບແຮງຈູງໃຈການຮຽນພາສາອັງກິດຂອງນັກສຶກສາປີ 2 ແລະ ປີ 3 ທີ່ມະຫາວິທະຍາໄລ ສຸພານຸວົງ

| ລ/ດ | ດ້ານແຮງຈູງໃຈ | $\bar{x}$ | SD | ລະດັບ |
|---|---|---|---|---|
| 1 | ລະດັບແຮງຈູງໃຈພາຍໃນ | 3.84474 | .892206 | ຫຼາຍ |
| 2 | ລະດັບແຮງຈູງໃຈພາຍນອກ | 4.16052 | .872006 | ຫຼາຍ |
| | **ລວມ** | **4.00263** | **.882106** | **ຫຼາຍ** |